## ມິຊຊາອາທິດທີ 23 ກຳນົດທຳມະດາ ປີ B
## ວັນທີ 5 ກັນຍາ 2021



**ພຣະວໍລະສານໂດຍນັກບຸນມັກໂກ 7, 31-37**

ໃນເວລານັ້ນ,ພຣະເຢຊູເຈົ້າສະເດັດອອກຈາກເຂດເມືອງຕີໂຣຜ່ານເມືອງ “ຊີດອນ” ແລະແຂວງເດກາໂປນເພື່ອໄປສູ່ທະເລສາບຄາລີເລ. ມີຄົນພາຄົນປາກກືກຫູໜວກຜູ້ໜຶ່ງມາຫາພຣະອົງ,ຂໍພຣະອົງຊົງປົກພຣະຫັດ. ພຣະເຢຊູເຈົ້າຊົງພາຄົນນັ້ນອອກຫ່າງຈາກຝູງຄົນ, ຊົງປ່ອນນິ້ວມືເຂົ້າໃນໂກນຫູເຂົາ, ເອົານ້ຳລາຍແປະໃສ່ລີ້ນໃຫ້ແລ້ວພຣະອົງຊົງເງີຍໜ້າຂຶ້ນເບື້ອງບົນ, ທັນໃຈຍາວແລ້ວກ່າວກັບຜູ້ນັ້ນວ່າ: “ແອບເຟຕາ” ໝາຍຄວາມວ່າ: “ຈົ່ງເປີດອອກ”. ໃນທັນທີຫູຂອງເຂົາກໍໄດ້ຍິນ, ລີ້ນກໍມາຍອອກແລະປາກໄດ້ຊັດແຈ້ງ.

ພຣະເຢຊູເຈົ້າຊົງຫ້າມບໍ່ໃຫ້ເວົ້າເລື່ອງນີ້ໃຫ້ຜູ້ໃດຟັງ.ແຕ່ແຮງຫ້າມພວກເຂົາແຮງປະກາດ. ພວກຜູ້ຄົນມີຄວາມອັດສະຈັນໃຈເປັນຢ່າງຍິ່ງເວົ້າວ່າ: “ຄົນຜູ້ນີ້ທຳສິ່ງໃດກໍດີໝົດໄດ້ທຳໃຫ້ຄົນຫູໜວກໄດ້ຍິນແລະຄົນກືກປາກໄດ້ດ້ວຍ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 7, 31-37**

ສິ່ງທຳອິດທີ່ພວກເຮົາສັງເກດໄດ້ໃນວາຈາພຣະເຈົ້າວັນນີ້ກໍຄື ພຣະເຢຊູເຈົ້າບໍ່ໄດ້ຢູ່ໃນເຂດຂອງພວກຢິວ, ແຕ່ພຣະອົງສະເດັດໄປເຂດຂອງຄົນຕ່າງສາດສະໜາ. ແລະກໍມີຄົນຂໍໃຫ້ພຣະອົງປິ່ນປົວຄົນປາກກືກຫູໜວກ. ແນ່ນອນ, ຄົນປາກກືກຫູໜວກນີ້ກໍເປັນຄົນຕ່າງສາດສະໜາດ້ວຍ. ພະຍາດນີ້ທຳໃຫ້ເຂົາບໍ່ສາມາດສື່ສານພົວພັນກັບຄົນທີ່ຢູ່ອ້ອມຂ້າງເຂົາໄດ້. ດັ່ງນີ້ເຂົາຈຶ່ງບໍ່ໄດ້ຢູ່ຮ່ວມສັງຄົມກັບຄົນອື່ນ. ວັນນີ້, ພຣະເຢຊູເຈົ້າມາເພື່ອເປີດຫູແລະມາຍລີ້ນເຂົາອອກ. ເພື່ອເຂົາຈະໄດ້ຟັງສຽງຂອງພຣະອົງແລະສັນລະເສີນພຣະເຈົ້າເຖິງສິ່ງມະຫັດສະຈັນທີ່ພຣະອົງໄດ້ຊົງກະທຳແກ່ເຂົາ. ບໍ່ພຽງແຕ່ຄົນປາກກືກຫູໜວກຫາຍດີນີ້ທີ່ປະກາດເຖິງສິ່ງມະຫັດສະຈັນທີ່ພຣະເຢຊູເຈົ້າໄດ້ກະທຳແກ່ເຂົາເທົ່ານັ້ນ, ແຕ່ຝູງຊົນທັງຫລາຍທີ່ໄດ້ເຫັນເຫດການນີ້ກໍໄດ້ປະກາດເລົ່າລືໃຫ້ທຸກຄົນໄດ້ຮູ້ຈັກດ້ວຍ. ເຫດການນີ້ທຳໃຫ້ເຫັນວ່າຂ່າວດີແຫ່ງອານາຈັກສະຫວັນໄດ້ມາຮອດມາເຖິງເຂດແດນຂອງຄົນຕ່າງສາດສະໜາແລ້ວ. ແລະພຣະເຢຊູເຈົ້າໄດ້ເປີດຫູເປີດປາກຂອງຄົນຕ່າງສາດສະໜາໃຫ້ພວກເຂົາໄດ້ຍິນວາຈາຂອງພຣະອົງແລະປະກາດຂ່າວດີນີ້ໄປທົ່ວເຂດແດນຂອງພວກເຂົາ.

ສ່ວນພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າ, ແຕ່ຫລາຍຄັ້ງພວກເຮົາກໍເປັນເໝືອນຄົນຕ່າງສາດສະໜາ. ເຊັ່ນວ່າພວກເຮົາປິດຫູຕົວເອງໄວ້ບໍ່ຢາກຟັງວາຈາຂອງພຣະອົງ. ພວກເຮົາປິດປາກຕົວເອງໄວ້ບໍ່ຢາກປະກາດເປັນພິຍານເຖິງສິ່ງມະຫັດສະຈັນທີ່ພຣະອົງໄດ້ກະທຳໃນຊີວິດພວກເຮົາ. ສິ່ງເຫລົ່ານີ້ທຳໃຫ້ພວກເຮົາຕັດຂາດຈາກພຣະເຈົ້າ, ຈາກຄວາມຮັກຂອງພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດເປີດຫູຂອງລູກເພື່ອລູກຈະໄດ້ຟັງວາຈາແລະຄຳບອກສອນຂອງພຣະອົງ. ຍ້ອນວາຈາຂອງພຣະອົງເປັນຄວາມຈິງແລະໃຫ້ຊີວິດແກ່ລູກ. ໂຜດເປີດປາກແລະມາຍລີ້ນຂອງລູກ ເພື່ອລູກຈະໄດ້ສັນລະເສີນແລະປະກາດສິ່ງມະຫັດສະຈັນທີ່ພຣະອົງຊົງກະທຳໃນຊີວິດຂອງລູກນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ